# ທະນາຄານ ຮ່ວມພັດທະນາ ມີແຜນທີ່ຈະເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ

ໃນວັນທີ 15/10/2014, ທະນາຄານ ຮ່ວມພັດທະນາ (JDB) ກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ (BCEL-KT) ເພື່ອກະກຽມຄວາມພ້ອມໃນການຫັນເປັນທະນາຄານມະຫາຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX) ໃນອະນາຄົດອັນໃກ້ນີ້. ຈຸດປະສົງ ກໍ່ເພື່ອເສີມສ້າງຄວາມຮັບຜິດຊອບຂອງຄະນະບໍລິຫານງານໃຫ້ມີຄວາມເຂັ້ມແຂງ ແລະ ບໍລິຫານອົງກອນຢ່າງມືອາຊີບ, ສ້າງຄວາມເຂັ້ມແຂງທາງດ້ານໂຄງສ້າງທຶນ ແລະ ຮັບປະກັນແຫຼ່ງທຶນໄລຍະຍາວໃຫ້ຫຼາກຫຼາຍ ສໍາລັບການຂະຫຍາຍທຸລະກິດໃນຕໍ່ໜ້າ. ສິ່ງເຫຼົ່ານີ້ກໍ່ເພື່ອຢືນຢັນເຖິງຄວາມມຸ້ງຫວັງທີ່ຈະສ້າງທະນາຄານໃຫ້ເປັນທະນາຄານຊັ້ນນໍາໃນ ສປປ ລາວ ແລະ ພາກພື້ນ. ພາຍໃຕ້ບົດບັນທຶກສະບັບນີ້, BCEL-KT ຈະເປັນທີ່ປຶກສາດ້ານການເງິນໃຫ້ JDB ພ້ອມທັງຊ່ວຍເຫຼືອ ທະນາຄານ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ທະນາຄານ ຮ່ວມພັດທະນາ ເປັນໜຶ່ງໃນບັນດາທະນາຄານທີ່ໃຫ່ຍທີ່ສຸດໃນ ສປປ ລາວ ຊຶ່ງເລີ່ມໃຫ້ບໍລິການໃນປີ 1989 ແລະ ໃຫ້ບໍລິການດ້ານການເງິນທີ່ຫຼາກຫຼາຍຮູບແບບ ແລະ ໄດ້ມີການພັດທະນາການບໍລິການຕ່າງໆ ໃຫ້ເປັນທີ່ຍອມຮັບໃນສັງຄົມລາວ ແລະ ໃນລະດັບສາກົນ ໃນທຸກໆດ້ານ.

ບໍລິສັດຫຼັກຊັບ ທຄຕລ-ກທ ຈໍາກັດ ເປັນບໍລິສັດຫຼັກຊັບຊັ້ນນໍາໃນ ສປປ ລາວ. BCEL-KT ໄດ້ປະສົບຜົນສໍາເລັດໃນການນໍາພາ 2 ໃນ 3 ບໍລິສັດຈົດທະບຽນທີ່ຢູ່ໃນຕະຫຼາດຫຼັກຊັບລາວ ສະເໜີອອກຈໍາໜ່າຍຮຸ້ນຄັ້ງທໍາອິດໃຫ້ແກ່ມວນຊົນ (IPO) ໃນປີ 2010 ແລະ 2013, ເຊິ່ງລວມມີ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ແລະ ບໍລິສັດ ລາວເວີນ ມະຫາຊົນ (LWPC) ຕາມລໍາດັບ. ນອກຈາກນັ້ນ, BCEL-KT ຍັງຄອງສ່ວນແບ່ງຕະຫຼາດດ້ານການຊື້-ຂາຍຮຸ້ນຫຼາຍທີ່ສຸດ ນັບຕັ້ງແຕ່ຕະຫຼາດຫຼັກຊັບລາວສ້າງຂຶ້ນໃນ 2010 ຊຶ່ງໃນນັ້ນ ສ່ວນແບ່ງຕະຫຼາດໃນປີ 2013 ມີເຖິງ 82%.